ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ

ລຶບລ້າງຄວາມທຸກຍາກຂັ້ນສູນກາງ

**ກອງທຶນຫຼຸດຜ່ອນຄວາມທຸກຍາກ**

# <u>ບົດລາຍງານ</u>

# ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳເດືອນ ຕຸລາ 2014

## I. ສະພາບການໂດຍລວມ

ໂດຍລວມແລ້ວ, ວຽກທີ່ພົ້ນເດັ່ນພາຍໃນເດືອນ ຕຸລາ 2014 ຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ລວມມີ:

1) ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາໂຄງການຍ່ອຍ ຂອງ ສົກປີ 2013 – 2014 ແລະ ຕິດຕາມແຜນຂອງການຈັດຕັ້ງປະຕິບັດໃນສົກປີ 2014-2015.
2) ກະກຽມສົ່ງບົດລາຍງານ ຂອງກອງທຶນຫລຸດຜ່ອນຄວາມທຸກຍາກປະຈຳສົກປີ 2013-2014
3) ສຳເລັດການປະເມີນຜົນການຈັດຕັ້ງປະຕິບັດກາງສະໄໝ ແລະ ຂື້ນແຜນງົບປະມານສຳລັບ ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ.
4) ຜົນການຈັດຕັ້ງປະຕິບັດວຽກງານດ້ານວິຊາສະເພາະຂອງແຕ່ລະພະແນກ ແລະ ໂດຍສະເພາະຫນ້າວຽກທີ່ພົ້ນເດັ່ນ.

## II. ການຕິດຕາໜ້າວຽກໂຄງການຍ່ອຍ

### 2. 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາໂຄງການຍ່ອຍຮອບວຽນ 11 ຂອງ (ສົກປີ 2013 – 2014)

### 2.1.1. ດ້ານການກໍ່ສ້າງໂຄງລ່າງພື້ນຖານ

ໃນສົກປີ 2013-2014 (ຮອບວຽນ 11) ທລຍ ໄດ້ຈັດຕັ້ງປະຕິບັດວຽກງານຢູ່ 10 ແຂວງ, 42 ເມືອງ, 278 ກຸ່ມບ້ານ ແລະ ກວມເອົາ 1951 ບ້ານ, ໃນຮອບວຽນດັ່ງກ່າວ ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນ 333 ໂຄງການ ແລະ ໃຊ້ງົບປະມານທັງໝົດປະມານ 9,698,846 ໂດລາສະຫະລັດ. ຕົກມາຮອດທ້າຍເດືອນ ຕຸລາ 2014 ຈຳນວນ 246 ໂຄງການ (72.37 %) ຂອງໂຄງການທັງໝົດໄດ້ຈັດຕັ້ງປະຕິບັດສຳເລັດ 100%. ພ້ອມດຽວກັນນັ້ນກໍ່ມີຈານວນ 67 ໂຄງການໄດ້ຈັດຕັ້ງປະຕິບັດຄືບໜ້າຫລາຍກວ່າ 50% ຂອງໜ້າວຽກທັງໝົດ ແລະ ຄາດວ່າຈະສຳເລັດໃນມໍ່ໆນີ້. ສຳລັບໂຄງ ການທີ່ເຫລືອຖືວ່າເປັນໂຄງການທີ່ຂ້ອນຂ້າງລ້າຊ້າເນື່ອງຈາກສະພາບດິນຟ້າອາກາດໃນຊ່ວງລະດູຝົນ ແລະ ໂຄງການເຫລົ່າ ນັ້ນຕັ້ງຢູ່ເຂດທຸລະກັນດານ ສະນັ້ນພາກສ່ວນທີ່ກ່ຽວຂ້ອງແມ່ນໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ເພື່ອໃຫ້ໂຄງການເຫລົ່ານັ້ນສຳເລັດ ແລະ ອຳນວຍຄວາມສະດວກສູງສຸດແກ່ຊຸມຊົນ ໂດຍການຕິດຕາມຢ່າງປົກກະຕິຂອງພະນັກງານ ທລຍ ແລະ ອົງການກ່ຽວຂ້ອງຂັ້ນທ້ອງຖິ່ນ (ລາຍລະ ອຽດຕາມຕາຕະລາງ 1 ແລະ 2)

ຕາຕະລາງ 1. ຄວາມຄືບໜ້າແບ່ງຕາມຂະແໜງການ

| ຂະແໜງການ | ຈຳນວນໂຄງການຍ່ອຍ | 0% | <50% | >=50% | 100% |
|---|---|---|---|---|---|
| ສຶກສາ | 119 | 1 | 10 | 28 | 80 |
| ຄົມມະນາຄົມ | 57 | 2 | 4 | 9 | 42 |
| ພະລັງງານໄຟຟ້າ | 6 | 0 | 5 | 0 | 1 |
| ສາທາລະນະສຸກ | 22 | 1 | 1 | 4 | 16 |
| ນ້ຳສະອາດ | 91 | 1 | 5 | 20 | 65 |
| ກະສິກຳ | 38 | 0 | 2 | 2 | 34 |
| ລວມ | **333** | **4** | **26** | **57** | **246** |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2014*

ຕາຕະລາງ 2. ຄວາມຄືບໜ້າແບ່ງຕາມແຂວງ

| ແຂວງ | ຈຳນວນໂຄງການ | 0% | <50% | >=50% | 100% |
|---|---|---|---|---|---|
| ຜົ້ງສາລີ | 23 | 0 | 0 | 0 | 23 |
| ອຸດົມໄຊ | 54 | 0 | 0 | 2 | 52 |
| ຫລວງພະບາງ | 43 | 0 | 3 | 17 | 23 |
| ຫລວງນ້ຳທາ | 16 | 0 | 0 | 2 | 14 |
| ຫົວພັນ | 69 | 0 | 0 | 11 | 58 |
| ຊຽງຂວາງ | 29 | 0 | 0 | 0 | 29 |
| ສະຫວັນນະເຂດ | 45 | 0 | 8 | 14 | 23 |
| ສາລະວັນ | 16 | 1 | 6 | 4 | 5 |
| ເຊກອງ | 20 | 0 | 3 | 3 | 14 |
| ອັດຕະປື | 18 | 3 | 6 | 4 | 5 |
| ລວມ | **333** | **4** | **26** | **57** | **246** |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ກັນຍາ 2014.*

### 2.1.2. <u>ດ້ານການເງິນ</u>

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ຕຸລາ 2014 ໄດ້ມີການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ແມ່ນ **45,934,780,421** ກີບ ເທົ່າກັບ 59,20% ຂອງງົບປະມານທັງໝົດ (**77,590,771,510** ກີບ) ສຳລັບການຈັດຕັ້ງປະຕິບັດໂຄງການໃນຮອບວຽນດັ່ງກ່າວ ແລະ ຍັງມີບາງແຂວງແມ່ນກຳລັງຢູ່ໃນຂັ້ນຕອນການກະກຽມເອກະສານ. ເຊິ່ງລາຍລະອຽດດັ່ງຕາຕະລາງ 3 ລຸ່ມນີ້:

ຕາຕະລາງ 3. ຄວາມຄືບໜ້າດ້ານການເງິນ (ກີບ)

| ແຂວງ | ງົບປະມານ (USD) | ງົບປະມານ (LAK) | 1st | 2nd | 3rd | 1st+2nd+3rd |
|---|---|---|---|---|---|---|
| ຫົວພັນ | 1,718,110 | 13,744,881,007 | 4,784,216,128 | 3,661,067,938 | - | 8,445,284,066 |
| ສະຫວັນນະເຂດ | 1,412,226 | 11,297,809,236 | 3,356,662,465 | 1,924,239,403 | - | 5,280,901,868 |
| ຊຽງຂວາງ | 845,871 | 6,766,964,761 | 1,700,698,641 | 1,460,862,133 | - | 3,161,560,774 |
| ສາລະວັນ | 549,360 | 4,394,878,390 | 573,531,467 | - | - | 573,531,467 |
| ຫລວງນໍ້າທາ | 445,274 | 3,562,188,983 | 1,742,680,071 | 845,696,566 | - | 2,588,376,637 |
| ເຊກອງ | 672,229 | 5,377,831,629 | 3,116,913,054 | 1,081,427,241 | - | 4,198,340,295 |
| ອັດຕະປື | 522,001 | 4,176,007,158 | 1,090,573,811 | - | - | 1,090,573,811 |
| ຜົ້ງສາລີ | 618,719 | 4,949,755,094 | 2,179,070,266 | 621,858,227 | - | 2,800,928,493 |
| ອຸດົມໄຊ | 1,648,401 | 13,187,209,433 | 7,721,285,050 | 4,666,551,771 | - | 12,387,836,821 |
| ຫລວງພະບາງ | 1,266,656 | 10,133,245,819 | 5,128,283,129 | 279,163,060 | - | 5,407,446,189 |
| | 9,698,846 | 77,590,771,510 | 31,393,914,082 | 14,540,866,339 | - | 45,934,780,421 |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ-ການເງິນ ທລຍ, ຕຸລາ 2014*

IDA : ອົງການຈັດຕັ້ງເພື່ອການພັດທະນາລະຫວ່າງປະເທດ/ກອງທຶນສາກົນເພື່ອລຸດຜ່ອນຄວາມທຸກຍາກ (ທະນາຄານໂລກ).

SDC : ອົງການຮ່ວມມືເພື່ອການພັດທະນາປະເທດສະວິດເຊີແລນ.

Water : ໂຄງການກ່ຽວກັບນໍ້າສະອາດຂອງ SDC.

GOL : ໂຄງການລົງທຶນທຶນລັດຖະບານ.

### 2.1.3. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 11 (GOL) ຮອດທ້າຍເດືອນ ຕຸລາ 2014

ໃນນັ້ນເປັນໂຄງການທີ່ລັດຖະບານໃຫ້ການສະໜັບສະໜູນທັງໝົດຈຳນວນ 63 ໂຄງການ ຢູ່ແຂວງຫົວພັນ, ແຂວງຊຽງຂວາງ, ແຂວງສະຫວັນນະເຂດ, ແຂວງສາລະວັນ ແລະ ແຂວງອັດຕະປື. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍໃນບ້ວງທຶນລົງທຶນຂອງລັດຖະບານ ມາຮອດ ທ້າຍເດືອນ ຕຸລາ 2014, ມີ 37 ໂຄງການແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ 100 %, ສ່ວນໂຄງການທີ່ຍັງເຫລືອແມ່ນຢູ່ໃນຂັ້ນຕອນຈັດຕັ້ງປະຕິບັດ ແລະ ຄາດວ່າຈະສາມາດສຳເລັດໃນໄວໆນີ້.(ລາຍລະອຽດເບິ່ງຕາຕະລາງ 4 ແລະ 5 ລຸ່ມນີ້).

ຕາຕະລາງ 4 : ໂຄງການລົງທຶນທຶນລັດຖະບານຮອບວຽນ 11 ຮອດທ້າຍເດືອນ ຕຸລາ 2014 (ແຍກຕາມຂະແໜງ)

| ຂະແໜງການ | ຈຳນວນໂຄງການ | 0% | <50% | >=50% | 100% | % |
|---|---|---|---|---|---|---|
| ສຶກສາ | 31 | 0 | 6 | 7 | 18 | 49% |
| ຄົມມະນາຄົມ | 3 | 0 | 1 | 1 | 1 | 5% |
| ສາທາ | 8 | 1 | 2 | 1 | 4 | 13% |
| ນໍ້າສະອາດ | 12 | 0 | 3 | 1 | 8 | 19% |
| ກະສິກຳ | 9 | 0 | 1 | 2 | 6 | 14% |
| ລວມ | 63 | 1 | 13 | 12 | 37 | 100% |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2014.*

ໝາຍເຫດ: ໂດຍອີງຕາມລະບຽບທາງການເງິນຕາມຮູບແບບຂອງລັດກໍຄືຜູ້ໃຫ້ທຶນຈຶ່ງໃຫ້ການປະມູນໂຄງການຍ່ອຍຈຳນວນໜຶ່ງລຸດລາຄາກາງຊຶ່ງສາມາດສັງລວມໄດ້ ຕົກເປັນມູນຄ່າ 617,703,637 ກີບ ສະນັ້ນ ກີບສາລັບງົບປະມານຕົວຈິງທີ່ຈະໄດ້ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍທີ່ລັດສະໜັບສະໜູນແມ່ນ 15,382,296,633 ກີບ ເຊິ່ງຖືວ່າຕ່ຳກວ່າຕ່ຳກວ່າງົບປະມານທັງໝົດທີ່ໄດ້ວາງແຜນ (16 ຕື້ກີບ) ທີ່ຈະລົງທຶນສຳລັບສົກປີດັ່ງກ່າວ.

ຕາຕະລາງ 5: ໂຄງການສົບທົບທຶນລັດຖະບານຮອບວຽນ 11 ຮອດທ້າຍເດືອນ ຕຸລາ 2014 (ແຍກຕາມແຂວງ)

| ແຂວງ | ຈຳນວນໂຄງການ | 0% | <50% | >=50% | 100% | % |
|---|---|---|---|---|---|---|
| ຫົວພັນ | 20 | 0 | 0 | 5 | 15 | 32% |
| ຊຽງຂວາງ | 15 | 0 | 0 | 0 | 15 | 24% |
| ສະຫວັນນະເຂດ | 15 | 0 | 7 | 3 | 5 | 24% |
| ສາລະວັນ | 6 | 0 | 2 | 2 | 2 | 10% |
| ອັດຕະປື | 7 | 1 | 3 | 3 | 0 | 11% |
| ລວມ | 63 | 1 | 12 | 13 | 37 | 100% |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2014.*

## 2. 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາໂຄງການຍ່ອຍໃນຮອບວຽນ 9 ແລະ 10

ໃນຮອບວຽນທີ 9 ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າຫມາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນ້ຳທາ) ແລະ ນຳໃຊ້ງົບປະມານທັງໝົດ 7,653,772 ໂດລາສະຫະລັດ. ມີພຽງຈຳນວນ 257 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສຳເລັດ 100 % ແລະງົບປະມານທີ່ໄດ້ນຳໃຊ້ 7,478,310 ໂດລາສະຫະລັດ ຫລື 98% ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດ ບາງໂຄງການໃນຮອບວຽນດັ່ງກ່າວແມ່ນຍັງມີຄວາມຫລ້າຊ້າ ແລະ ບໍ່ສຳເລັດຕາມຄາດໝາຍ, ມີ 4 ໂຄງການຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດຄື 1 ໂຄງການທີ່ຢູ່ແຂວງ ເຊກອງ ແລະ 3 ໂຄງການຢູ່ແຂວງ ອັດຕະປື ແລະ ສ່ວນ 1 ໂຄງການ ຢູ່ແຂວງຫລວງນ້ຳທາ ນັ້ນແມ່ນໄດ້ຍົກເລີກການກໍ່ສ້າງ. ສຳລັບຄວາມຫລ້າຊ້າໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວແມ່ນກ່ຽວຂ້ອງກັບທີ່ຕັ້ງໂຄງການ ແລະ ດິນຟ້າ ອາກາດ ແລະ ບັນຫາອື່ນ ໆ ເພື່ອແກ້ໄຂບັນຫາດັ່ງກ່າວ ທລຍ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອແກ້ໄຂ ແລະ ເຮັດໃຫ້ໂຄງການດັ່ງກ່າວປະສົບຜົນສຳເລັດໄວໆນີ້.

ໃນຮອບວຽນທີ 10 ທລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດຈຳນວນ 9,889,886 ດອນລາສະຫະລັດ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາ, ມີຈຳນວນ 391 ໂຄງການທີ່ໄດ້ສຳເລັດການກໍ່ສ້າງ ແລະ ງົບປະມານ 9,639,698 ໂດລາສະຫະລັດ (97%) ແມ່ນໄດ້ຖືກໂອນສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສຳລັບ 2 ໂຄງການ ແມ່ນຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດຄື: 1 ໂຄງການຢູ່ແຂວງ ຫຼວງນ້ຳທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ້າຊ້າເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ ອຸປະກອນສ່ວນໃຫຍ່ແມ່ນນຳມາຈາກຕ່າງປະເທດ, ເປັນທຶນສົມທົບລະຫວ່າງ ທລຍ ແລະ ພາກສ່ວນອື່ນ ແລະ 1 ໂຄງການຢູ່ແຂວງ ຫຼວງພະບາງ ເມືອງໂພນໄຊ ບ້ານຫ້ວຍປຽນ ໂຄງການກໍ່ສ້າງໂຮງຮຽນ ຊັກຊ້າເນື່ອງຈາກວ່າທາງເຂົ້າບ້ານຂາດຕັ້ງແຕ່ຊ່ວງລະດູຝົນ ຫລັງຈາກສ້ອມແປງທາງສຳເລັດແລ້ວຈຶ່ງສາມາດຂົນວັດສະດຸເຂົ້າໄປໄດ້.

## 2. 3. ແຜນການດຳເນີນງານໃນສົກປີ 2014-2015

ໃນສົກປີ 2014-2015 ນີ້, ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈະເລັ່ງໃສ່ຈັດຕັ້ງປະຕິບັດບັນດາໜ້າວຽກລຸ່ມນີ້ໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍລຸ່ມນີ້:

- ເອົາໃຈໃສ່ໃນການວາງແຜນ, ສຳຫຼວດອອກແບບ, ແລະ ຂັ້ນຕອນຕ່າງໆກ່ຽວກັບການຈັດຕັ້ງປະຕິບັດໂຄງການຍ່ອຍໃນຮອບວຽນ 12 (ສົກປີ 2014-2015). ໃນນັ້ນ, ມີ 74 ໂຄງການ ທີ່ເປັນທຶນສົບທົບຈາກລັດຖະບານເຮົາ. ສຳລັບໂຄງການພາຍໃຕ້ທຶນຕ່າງປະເທດ ແມ່ນຢູ່ໃນຂັ້ນຕອນກະກຽມສຳຫຼວດອອກແບບ ແລະ ຄາດວ່າຈະໄດ້ຂໍ້ມູນລະອຽດໃນລະຫວ່າງເດືອນພະຈິກ-ທັນວາ 2014.
- ຈັດຕັ້ງປະຕິບັດໂຄງການຍ່ອຍເພີ່ມທີ່ກ່ຽວກັບຫ້ອງນ້ຳ ແລະ ເພດານຂອງໂຮງຮຽນ ແລະ ສຸກສາລາ ເຊິ່ງເປັນແຫຼ່ງທຶນເພີ່ມ ຈາກ ອົງການພັດທະນາ ແລະ ການຮ່ວມມື ແຫ່ງປະ ເທດສະວິດເຊີແລນ ຈຳນວນ 436.000 ໂດລາສະຫະລັດ ໃຫ້ສຳເລັດຕາມຄາດໝາຍ.
- ຈັດຕັ້ງປະຕິບັດໂຄງການຍ່ອຍຈາກບ້ວງທຶນ ຂອງ ໂຄງການປັບປຸງຊີວິດການເປັນຢູ່ ຢູ່ເຂດ ເນີນສູງ ມີ 10 ໂຄງການທີ່ຈັດຕັ້ງຢູ່ແຂວງສາລະວັນ, ເຊກອງ ແລະ ອັດຕະປື ໃຫ້ສຳແລັດ ຕາມແຜນ.
- ເລັ່ງໃສ່ຈັດຕັ້ງປະຕິບັດໂຄງການຍ່ອຍ ຂອງ ຮອບວຽນ 9, 10, ແລະ 11 ທີ່ຍັງເຫຼືອໃຫ້ສຳເລັດ. ລວມທັງຕິດຕາມການນຳໃຊ້ ແລະ ບຳລຸງຮັກສາບັນດາໂຄງການທີ່ເຮັດສຳເລັດໄປແລ້ວໃນຮອບວຽນຜ່ານມາວ່າຖືກນຳໃຊ້ ແລະ ອຳນວຍຄວາມສະດວກໃຫ້ຊຸມຊົນໄດ້ພຽງໃດແທ້.
- ເອົາໃຈໃສ່ຂອດການປະສານງານ ລະຫວ່າງ ທລຍ ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອໃຫ້ເຂົາເຈົ້າເຂົ້າໃຈລະບຽບການ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດວຽກງານ ແລະ ຮັບປະກັນປະສິດຕິພາບຂອງວຽກງານ ທລຍ.

## *III.* ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ

### 3.1. ຜົນການຈັດຕັ້ງປະຕິບັດກິດຈະກຳ

- ມາຮອດປະຈຸບັນ,ໂຄງການສາມາດສ້າງຕັ້ງກຸ່ມຊ່ວຍເຫລືອຊຶ່ງກັນໃນຮອບວຽນທີ 3 ໃນ 4 ຕົວເມືອງ. ລວມທັງໝົດມີ 35 ບ້ານ, ມີ ຈຳນວນ 148 ກຸ່ມ ແລະມີສະມາຊິກທັງໝົດມີ 2,056 ຄົນ ເພດຊາຍມີ 445 ຄົນ ເທົ່າກັບ 21,7 % ແລະ ເພດຍິງມີ 1,611 ຄົນ ເທົ່າກັບ 78,3 % ໃນ 4 ເມືອງຄື: ເມືອງ ເຊໂປນ, ເມືອງ ນອງ ,ເມືອງ ຣັ້ງມ ແລະ ເມືອງ ຊ້ອນ ລາຍລະອຽດເບິ່ງຕາຕະລາງ 1 ຢູ່ຂ້າງລຸ່ມ:

ຕາຕະລາງ 6: ກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນ

| ຊື່ແຂວງ | ຊື່ເມືອງ | ຈຳນວນບ້ານ | ຈ/ນ ກຸ່ມ ກຊກ | ຈ/ນ ສະມາຊິກ | ເພດຍິງ | ເພດຊາຍ |
|---|---|---|---|---|---|---|
| ສະຫວັນນະເຂດ | ເຊໂປນ | 10 | 44 | 566 | 371 | 195 |
| | ນອງ | 15 | 67 | 961 | 945 | 16 |
| ຫົວພັນ | ຣັ້ງມ | 4 | 14 | 191 | 111 | 80 |
| | ຊ້ອນ | 6 | 23 | 338 | 184 | 154 |
| ລວມທັງໝົດ: | 4 | 35 | 148 | 2,056 | 1,611 | 445 |

*<u>ແຫຼ່ງຂໍ້ມູນ</u>: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ, ທລຍ/ຄປຟ ຕຸລາ 2014*

ມາຮອດປະຈຸບັນ ໂຄງການສຳເລັດການຂຶ້ນແຜນງົບປະມານໃນຮອບວຽນທີ 2 ເປັນຈຳນວນເງິນທັງໝົດ 411,415 ໂດລາສະຫະລັດ. ສ່ວນຮອບວຽນທີ 3 ສຳເລັດການໂອນເງິນສະໜັບສະໜູນໂຄງການຍ່ອຍໃນ 10 ບ້ານຂອງເມືອງ ນອງ ດ້ານປັບປຸງຊີວິດການເປັນຢູ່ ຈຳນວນ 1,038,400,000 ກີບ ,ເທົ່າກັບ 129,800 ໂດລາສະຫະລັດໃນ

ຈໍານວນສະມາຊິກ 649 ຄົນ ແລະ ຍັງເຫລືອ ຈໍານວນ 312 ຄົນ ກໍາລັງປະກອບເອກະສານທີ່ຈະໂອນໃນທ້າຍເດືອນ 11/2014 ນີ້, ແລະ ດ້ານໂພຊະນາການໄດ້ໂອນໄປແລ້ວ 362,215,000 ກີບ ເທົ່າກັບ 45,276,875 ໂດລາສະຫະລັດ ເພື່ອສ້າງຕັ້ງສູນໂພຊະນາການບ້ານຈໍານວນ 3 ສູນຄື: ສູນ ແກ້ງລົ້ມ, ສູນຕໍາລອງ ແລະ ສູນບ້ານແດນວິໄລ. ລວມຈໍານວນທີ່ໂອນໃຫ້ ເມືອງນອງ ທັງໝົດມີຈໍານວນມີ 1,400,615,000 ກີບ ເທົ່າກັບ 175,076 ໂດລາສະຫະລັດ.

## 3.2 ດ້ານການຝຶກອົບຮົມ:

ສໍາລັບເມືອງນອງແມ່ນໄດ້ກະກຽມ ລົງໄປ ຄິດໄລ່ເສດຖະກິດຄົວເຮືອນ ໃນຈໍານວນ 5 ບ້ານທີ່ຍັງເຫລືອ ແລະ ຄາດວ່າຈະໃຫ້ສໍາເລັດໃນທ້າຍເດືອນ 11/2014 ນີ້ ແລະ ຈະໄດ້ເປີດຊຸດຝຶກອົບຮົມໃຫ້ຊາວບ້ານຕາມກິດຈະກໍາຕ່າງໆ ທີ່ປະຊາຊົນໄດ້ເລືອກໄວ້ແລ້ວເຊັ່ນ: ການລ້ຽງໝູ, ລ້ຽງເປັດ, ລ້ຽງໄກ່, ລ້ຽງປາ, ລ້ຽງກົບ, ຕໍ່າຫູກ ແລະ ປູກເຫັດເປັນຕົ້ນ. ສ່ວນຈໍານວນ 6 ບ້ານຂອງເມືອງຊ່ອນ ແລະ 4 ບ້ານຂອງເມືອງຮົ້ຽມແມ່ນກໍາລັງຂຽນແຜນໄລ່ລຽງເສດຖະກິດຄົວເຮືອນ ແລະ ຄາດວ່າຈະໃຫ້ສໍາເລັດໃນ ທ້າຍເດືອນ 11 /2014 ນີ້. ສ່ວນຈໍານວນ 10 ບ້ານຂອງເມືອງເຊໂປນ ແມ່ນໄດ້ຈັດຕັ້ງກຸ່ມ ກຊກ ສໍາເລັດແລ້ວ ປະຈຸບັນແມ່ນໄດ້ດໍາເນີນການສ້າງຕັ້ງກຸ່ມທ້ອນເງິນ ແລະ ໃນທ້າຍເດືອນ11/2014 ຈະໃຫ້ສໍາເລັດ ແລະ ຈັດຕັ້ງປະຕິບັດການຂຽນໂຄງການຍ່ອຍສ້າງແຜນເສດຖະກິດຄົວເຮືອນໄປພ້ອມໆກັນ.

ຕາຕະລາງ 7: ກຸ່ມທ້ອນເງິນ

| ເມືອງ | ຈ/ນ ບ້ານ | ຈ/ນ ກຸ່ມ | ຈໍານວນສະມາຊິກຂອງກຸ່ມ | | | | | ຈໍານວນເງິນທ້ອນທັງໝົດ 10/2014 |
|---|---|---|---|---|---|---|---|---|
| | | | ລວມ | ຍິງ | % ຍິງ | ຊາຍ | % ຊາຍ | |
| 1-ເຊໂປນ | 10 | 44 | 566 | 371 | 65.5% | 195 | 34.5% | 0 |
| 2-ເມືອງ ນອງ | 15 | 67 | 961 | 945 | 98.3% | 16 | 1.7% | 6.843.000 |
| 3-ເມືອງຮົ້ຽມ | 4 | 14 | 191 | 111 | 58% | 80 | 42% | 2.750.000 |
| 4-ເມືອງຊ່ອນ | 6 | 23 | 338 | 184 | 54.4% | 154 | 45.6% | 2.704.000 |
| | 35 | 148 | 2,056 | 1,611 | 78.3% | 445 | 21.7% | 12.297.000 ກີບ |

*ແຫຼ່ງຂໍ້ມູນ: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ຫລຍ/ຄປພ ຕຸລາ 2014*

ຕາຕະລາງ 8: ກິດຈະກໍາການສ້າງລາຍຮັບ:

| ຊື່ບ້ານ | ຈ/ນ ກຸ່ມ | ຈ/ນ ສ/ຊ | ຈ/ນ ຊາຍ | ຈ/ນ ຍິງ | ກິດຈະກໍາ | ທຶນສະໜັບສະໜູນ | ຈ/ນເງິນສ້າງລາຍຮັບ | ເງິນກໍາໄລ |
|---|---|---|---|---|---|---|---|---|
| ບ.ຫ້ວຍສາ | 3 | 32 | 20 | 12 | ໄກ່,ໝູ,ປາ | 33,563,000 | 166,060,000 | 132,497,000 |
| ບ.ແທ່ນຮິ້ງ | 3 | 52 | 29 | 23 | ໄກ່,ໝູ,ຕໍ່າຫູກ | 54,115,000 | 77,635,000 | 23,520,000 |
| ບ.ສາຫົກ | 4 | 75 | 53 | 22 | ໄກ່,ປາ,ຕໍ່າຫູກ | 71,617,000 | 213,225,000 | 141,608,000 |
| ບ.ດອນຄູນ | 4 | 79 | 53 | 26 | ໄກ່,ແບ້,ຕໍ່າຫູກ,ໝູ | 82,874,000 | 107,004,000 | 24,130,000 |
| ບ.ແກ້ງກີ | 3 | 34 | 0 | 34 | ຕໍ່າຫູກ | 30,242,000 | 152,181,000 | 121,939,000 |
| ບ.ສະແກງ | 7 | 89 | 45 | 44 | ໄກ່,ປາ,ປູກສາລີ | 78,827,454 | 9,239,000 | -(69,588,454) |
| ລວມ: 6 | 24 | 361 | 200 | 161 | | 351,238,545 | 725,344,000 | 374,105,546 |

*ແຫຼ່ງຂໍ້ມູນ: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ຫລຍ/ຄປພ ຕຸລາ 2014*

## 3.3 ສໍາເລັດສະຫລຸບສັງລວມໂຄງການ ຄປພ(ລອງ):

ໄດ້ສຳເລັດເຮັດບົດສະຫລຸບປະຈຳປີຂອງໂຄງການໃນການປະຕິບັດວຽກງານຜ່ານມາແມ່ນສາມາດຈັດຕັ້ງປະຕິບັດໄດ້ 86% ແລະດຳເນີນໃນການນຳໃຊ້ງົບປະມານໄດ້ 62%. ໂຄງການດັ່ງກ່າວແມ່ນໄດ້ບັນລຸເປົ້າໝາຍທີ່ຕັ້ງເອົາໄວ້ຄື : ມີຈຳນວນ 85 ບ້ານ 260 ກຸ່ມ ກຊກ 2,600 ຄົວເຮືອນ ແລະ ຜູ້ໄດ້ຮັບຜົນປະໂຫຍດໃຫ້ໄດ້ 15,600ຄົນ . ຕາມຄາດໝາຍດັ່ງກ່າວ ຮອດປະຈຸບັນແມ່ນພວກເຮົາສາມາດປະຕິບັດໄດ້ດັ່ງນີ້: 85 ບ້ານ, ໄດ້ 306 ກຸ່ມ; ມີ 4,372 ຄົວເຮືອນ, ເປັນຜູ້ຍິງ ຈຳນວນ 3,181 ຄົນ ເທົ່າກັບ 73% (ຕາມຄາດໝາຍແມ່ນໃຫ້ຈຳນວນແມ່ຍິງ ກວມເອົາ 60%) ແລະ ຈຳນວນຜູ້ໄດ້ຮັບຜົນປະໂຫຍດ 26,016 ຄົນ. ການປະຕິບັດໂຄງການດັ່ງກ່າວແມ່ນກຳລັງດຳເນີນຕໍ່ໄປຕາມຂັ້ນຕອນທີ່ໄດ້ວາງແຜນເອົາໄວ້.

## *IV. ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ*

**ວຽກພັດທະນາຊຸມຊົນ**

- ໃນໄລຍະເດືອນຕຸລາທີ່ຜ່ານມາ 37 ເມືອງ, ທລຍ ໄດ້ສຳເລັດການຈັດກອງປະຊຸມປະສານງານ ແລະ ວາງແຜນພັດທະນາກຸ່ມບ້ານຂັ້ນເມືອງ ຊຶ່ງສາມາດສັງລວມໄດ້ ຈຳນວນໂຄງການຍ່ອຍ ທີ່ ທລຍ ຈະລົງທຶນໃສ່ໃນຮອບວຽນ 12
- ລົງສາທິດການຈັດກອງປະຊຸມວາງແຜນພັດກຸ່ມບ້ານໃນຮູບແບບ CDD ເຕັມຮູບແບບ ສຳລັບ ພະນັກງານ ທລຍ ທີ່ເຮັດວຽກ ໃນ 4 ເມືອງທົດລອງ ຢູ່ແຂວງ ຫລວງພະບາງ ແລະ ແຂວງ ອຸດົມໄຊ.
- ສັງລວມຂໍ້ມູນຜົນກະທົບທາງສັງຄົມ ແລະ ສືບຕໍ່ຕິດຕາມການດຳເນີນນະໂຍບາຍການປ້ອງກັນຜົນກະທົບດ້ານສັງຄົມໃນລະຫວ່າງການສຳຫລວດອອກແບບໂຄງການຍ່ອຍ.
- ສຳເລັດການລົງຕິດຕາມ ແລະ ສາທິດການຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ ໃນຮູບແບບ CDD ເຕັມຮູບແບບ ຢູ່ເມືອງນາໝໍ້ ແຂວງອຸດົມໄຊ ໃນລະຫວ່າງວັນທີ 13-18 ຕຸລາ 2014.
- ໄດ້ລົງຕິດຕາມການຈັດຕັ້ງປະຕິບັດວຽກງານ ທລຍ ແລະ ກະກຽມການຮັບຕ້ອນທີມງານຜູ້ໃຫ້ ຢູ່ແຂວງຜົ້ງສາລີ, ແຂວງອຸດົມໄຊ ແລະ ແຂວງຫລວງນ້ຳທາ. ໃນລະຫວ່າງ ວັນທີ່ 28/10/2014 ຫາ ວັນທີ່ 04/11/2014.
- ສຳເລັດກອງປະຊຸມປະສານງານການວາງແຜນ ຂັ້ນເມືອງ ຮອບວຽນທີ 12 ຂອງເມືອງວຽງພູຄາ ແຂວງຫຼວງນ້ຳທາ.
- ສຳເລັດກອງປະຊຸມທົບທວນຄືນກ່ຽວກັບວຽກງານ ຕິດຕາມປະເມີນຜົນ ທລຍ ປະຈຳປີ 2014.
- ຈັດກອງປະຊຸມປະສານງານການວາງແຜນ ພັດທະນາກຸ່ມບ້ານ ຂັ້ນເມືອງ ຂອງເມືອງທ່າປາງທອງ ແຂວງສະຫວັນນະເຂດ ສຳລັບ ຮອບວຽນ 12.
- ຈັດກອງປະຊຸມປະສານງານການວາງແຜນຂັ້ນເມືອງ ຂອງເມືອງວິລະບຸລີ ແຂວງ ສະຫວັນນະເຂດ.
- ສຳເລັດອອກແບບເຄື່ອງມື IEC ຂອງໂຄງການ ຄປພ: ປຶ້ມຄູ່ມືແນະນຳການກິນອາຫານແຕ່ລະວັນ, ປຶ້ມຄູ່ມືຈຳແນກພາວະການຂາດສານອາຫານ, ປຶ້ມຄູ່ມືການຖືພາ ແລະ ການດູແລກ່ອນເກີດ, ປຶ້ມຄູ່ມືແມ່ເກີດລູກໃໝ່ ແລະ ການດູແລຫລັງເກີດ, ປຶ້ມຄູ່ມືສູດການປຸງແຕ່ງອາຫານເສີມສຳລັບເດັກອ່ອນ ແລະ ເດັກນ້ອຍ, ແຜ່ນໂຄສະນາໝູ່ອາຫານ, ແຜ່ນໂຄສະນາພາວະການຂາດສານ, ແຜ່ນໂຄສະນານ້ຳນົມແມ່ມີຄຸນປະໂຫຍດອັນລໍ້າຄ່າ, ແຜ່ນໂຄສະນາພຶດຕະກຸນທົ່ວ, ແຜ່ນພັກ ໝວດອາຫານ, ແຜ່ນພັກ ຈຳແນກພາວະເດັກຂາດສານອາຫານ, ແຜ່ນພັກ ການຖືພາ ແລະ ການດູແລກ່ອນເກີດ, ແຜ່ນພັກ ແມ່ເກີດລູກ ໃໝ່ ແລະ ການດູແລຫລັງເກີດ, ແຜ່ນພັກ ອາຫານທີ່ມີປະໂຫຍດ ແລະ ຄວນປູກໄວ້ ຜັກໝາກໄມ້ ແລະ ວິທີການປຸງແຕ່ງ, ແຜ່ນພັກ ອາຫານຫລັກທີ່ເປັນປະ

ໂຫຍດ ຄອນປຸກ ແລະ ການປຸງແຕ່ງອາຫານ, ແຜ່ນພັກ ພຶດຕະກຸນທີ່ວທີ່ມີປະໂຫຍດ ແລະ ຄອນປຸກ & ການປຸງແຕ່ງອາຫານ

- ເຂົ້າຮ່ວມວາງສະແດງຮູບພາບ ແລະ ສິ່ງພິມຕ່າງໆ ທີ່ກອງປະຊຸມວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ປະຈຳປີ 2013-2014 ທີ່ສູນຝຶກອົບຮົມ ແລະ ພັດທະນາລາວ-ຍີ່ປຸ່ນ

**ວຽກວິສະວະກຳ**

1. ຈັດຝຶກອົບຮົມການອອກແບບ ຂົວອຸ່ ຢູ່ແຂວງຫລວງນ້ຳທາ ຮ່ວມກັບໂຄງການ Hevetas ໃນລະຫວ່າງວັນທີ 9-16 ເດືອນຕຸລາ 2014 ສຳເລັດ 100%
2. ກະກຽມແຜນລົງກວດກາຄຸນນະພາບຂອງໂຄງການຍ່ອຍ 4 ແຂວງພາກເໜືອ: ແຂວງຜົ້ງສາລີ, ແຂວງຫລວງນ້ຳທາ , ແຂວງອຸດົມໄຊ ແລະ ແຂວງຫລວງພະບາງ (ຍັງບໍ່ໄດ້ລົງມືສຳຫລວດເນື່ອງຈາກວິຊາການຍັງບໍ່ພ້ອມ)
3. ສຳເລັດການອອກແບບ-ຄິດໄລ່ ຫໍປະຊຸມບ້ານ 100 %
4. ລົງສຳຫລວດໂຄງການຍ່ອຍ ຮອບວຽນ 12 ຮ່ວມກັບທີມງານຂັ້ນແຂວງ ແລະ ເມືອງ ຢູ່ ແຂວງອຸດົມໄຊ ຈຳນວນ 2 ໂຄງການ, ຜົ້ງສາລີ 1 ໂຄງການ, ຫລວງນ້ຳທາ 1 ໂຄງການ ແລະ ຫລງພະບາງ 1 ໂຄງການ.
5. ເຂົ້າຮ່ວມຝຶກອົບຮົມກ່ຽວກັບວຽກງານທາງຊົນນະບົດ ຢູ່ປະເທດ ອິດຕາລີ ໃນລະຫວ່າງວັນທີ 29 ກັນຍາ 2014 ຫາ ວັນທີ 10 ຕຸລາ 2014 ຈັດໂດຍອົງການ ILO
6. ສຳເລັດປັບປຸງແບບແຕ້ມກໍ່ສ້າງໂຄງການຍ່ອຍປະເພດອາຄານ ແລະ ນ້ຳບາດານ 100 %

**ວຽກງານຈັດຕັ້ງ**

ຄວາມຄືບໜ້າໃນການການປະເມີນ ແລະ ຄັດເລືອກພະນັກງານ ໃນຕຳແໜ່ງທີ່ຍັງຫວ່າງ:

1. ໄດ້ສຳເລັດການປະເມີນ ແລະ ຄັດເລືອກພະນັກງານ ໃນຕຳແໜ່ງຕ່າງໆດັ່ງລຸ່ມນີ້:

- ວິສະວະກອນ ປະຈຳແຂວງຜົ້ງສາລີ 01 ຕຳແໜ່ງ, ເລີ້ມປະຈຳການ 01/11/2014
- ບໍລິຫານ-ການເງິນ ປະຈຳເມືອງດາກຈຶງ ແຂວງເຊກອງ 01 ຕຳແໜ່ງ, ເລີ້ມປະຈຳການ 01/11/2014
- ປະສານງານເມືອງດ້ານປັບປຸງຊີວິດການເປັນຢູ່ ປະຈຳເມືອງນອງ, ແຂວງສະຫວັນນະເຂດ 01 ຕຳແໜ່ງ, ເລີ້ມປະຈຳການ 13/10/2014
- ງົບປະມານ-ການເງິນ ປະຈຳຫ້ອງການ ຫລຍ ສູນກາງ, 01 ຕຳແໜ່ງ, ເລີ້ມປະຈຳການ 3/11/2014
- ຮັບສະໝັກ ແລະ ຄັດເລືອກຊ່ຽວຊານຕ່າງປະເທດ ໄລຍະສັ້ນ 2 ຕຳແໜ່ງ: ຊ່ຽວຊານວາງແຜນງົບປະມານ ແລະ ນະໂຍບາຍດ້ານບຸກຄະລາກອນ: ປະຈຸບັນຢູ່ໃນຂັ້ນຕອນການກວດກາ ເພື່ອຄັດຈ້ອນບັນຊີສັ້ນ ແລະ ຄາດຄະເນໃຫ້ສຳເລັດໃນອາທິດທີ 2 ຂອງເດືອນພະຈິກ
- ຜູ້ຊ່ວຍບໍລິຫານ-ການເງິນຂອງ ຄປພ ປະຈຳ ຫລຍ ແຂວງຫົວພັນ: ຜູ້ໃຫ້ທຶນໄດ້ສົ່ງຈົດໝາຍອະນຸມັດເຊັນສັນຍາໃນວັນທີ 7/11/2014

2. ໄດ້ສຳເລັດການສັງລວມຂໍ້ມູນ ແລະ ຂຽນບົດລາຍງານພາກວຽກງານຈັດຕັ້ງ ເພື່ອປະກອບເຂົ້າໃນບົດລາຍງານປະຈຳປີ

**ວຽກຕິດຕາມ ແລະ ປະເມີນຜົນ**

ວຽກງານທີ່ພົ້ນເດັ່ນຂອງພະແນກຕິດຕາມ-ປະເມີນຜົນ ໃນເດືອນ ຕຸລາ 2014

1. ເອົາໃຈໃສ່ຕິດຕາມ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍຂອງສົກປີ 2013-2014 ໃນແຕ່ລະແຂວງ ແລະ ລາຍງານຕໍ່ລັດຖະບານ ແລະ ຜູ້ໃຫ້ທຶນ.

2. ສຳເລັດການກະກຽມບົດສະຫລຸບຫຍໍ້ຜົນໄດ້ຮັບຂອງວຽກງານ ທລຍ ແຕ່ປີ 2003-2014 ເພື່ອລາຍງານຕໍ່ລັດຖະບານ.
3. ຕິດຕາມການນຳໃຊ້ ແລະ ປົກປັກຮັກສາບັນດາໂຄງການຍ່ອຍ ທີ່ໄດ້ໃຫ້ການສະໜັບສະໜູນໃນຮອບວຽນ 9 ແລະ 10 ແຕ່ປີ 2011-2013 ເຊິ່ງມີຈານວນທັງໝົດ 648 (99 %)ຈາກ 655 ໂຄງການ ທີ່ເຮັດສາເລັດ ໃນນັ້ນມີພຽງ 635 ໂຄງການ ເທົ່ານັ້ນ ທີ່ສາມາດຖືກນຳໃຊ້ ສຳລັບໂຄງການທີ່ເຫລືອແມ່ນຖືກຜົນກະທົບຈາກໄພທຳມະຊາດ ແລະ ເກີນກວ່າຄວາມອາດສາມາດຂອງຊຸມຊົນທີ່ຈະສ້ອມແປງເອງໄດ້. ສະນັ້ນ ເພື່ອໃຫ້ໂຄງການດັ່ງກ່າວຖືກນາໃຊ້ໄດ້ຄືນ ແມ່ນໄດ້ມີການປະສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອສ້ອມແປງຄືນ. ສາລັບໂຄງການທີ່ໄດ້ເຮັດສຳເລັດນັ້ນແມ່ນໄດ້ສ້າງຕັ້ງຄະນະຄຸ້ມຄອງ ແລະ ນຳໃຊ້ ໂດຍການເກັບພັນທະການນຳໃຊ້ຂັ້ນຕ່ຳນຳຊຸມຊົນເພື່ອເປັນທຶນມນການສ້ອມແປງໃນກໍລະນີເປ່ເພ.
4. ກະກຽມບົດລາຍງານປະຈຳສົກປີ 2013-2014 ສະບັບພາສາອັງກິດ ເພື່ອລາຍງານຕໍ່ຜູ້ໃຫ້ທຶນ ບົດລາຍງານດັ່ງກ່າວຈະໄດ້ສະຫລຸບເອົາຜົນຂອງການຈັດຕັ້ງປະຕິບັດຕ່າງໆຂອງ ທລຍ ເພື່ອທຽບກັບຕົວຊີ້ວັດຜົນໄດ້ຮັບຂອງໂຄງການ (ການປັບປຸງພື້ນຖານໂຄງລ່າງໃຫ້ແກ່ຊຸມຊົນ, ການມີສ່ວນຮ່ວມໃນການຕັດສິນໃຈ ໂດຍສະເພາະເພດຍິງ ແລະ ຊຸມຊົນທີ່ທຸກຍາກທີ່ສຸດ, ການປະກອບສ່ວນຂອງຊຸມຊົນ, ຄວາມຍືນຍົງຂອງໂຄງການ, ແລະ ອື່ນໆ) ລວມທັງຜົນສຳເລັດຕ່າງໆ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອປັບປຸງສຳລັບເຄື່ອນໄຫວວຽກງານໃນຕໍ່ໜ້າ.

**ວຽກບໍລິຫານ ແລະ ການເງິນ**

1. ການຂໍທຶນສົມທົບລັດຖະບານ ປະຈຳສົກປີ 2013-2014 ຫຼື ຮອບວຽນ 11 ຈຳນວນ 63 ໂຄງການ ປະຈຸບັນແມ່ນງົບປະມານໄດ້ເຂົ້າໃນບັນຊີຂອງ ທລຍ ທີ່ຂຶ້ນກັບຄັງເງິນແຫ່ງຊາດ ແລະ ກຳລັງກະກຽມເອກະສານເພື່ອຂໍນຳໃຊ້ທຶນດັ່ງກ່າວ (ຈ່າຍ) ໃຫ້ກັບໂຄງການຕ່າງໆທີ່ໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ.
2. ສຳເລັດການຝຶກອົບຮົມບໍລິຫານ-ການເງິນໃຫ້ກັບພະນັກງານແຂວງ ໃນການຝຶກອົບຮົມປະກອບມີ
    - ການປັບປຸງການເຮັດບົດລາຍງານບໍລິຫານ-ການເງິນ ແລະ ບົດລາຍງານເພີ່ມເຕີມ
    - ບັນຫາ ແລະວິທີການແກ້ໄຂບັນຫາທີ່ມັກພົບພໍ້.
    - ການປະກອບເອກະສານໂຄງການຍ່ອຍທຶນສົມທົບລັດຖະບານປະຈຳຮອບວຽນ 12

## V. *<u>ແຜນການຈັດຕັ້ງປະຕິບັດສຳລັບເດືອນ ພະຈິກ 2014</u>*

ສຳລັບເດືອນ ພະຈິກ 2014 ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈະເລັ່ງໃສ່ຈັດຕັ້ງປະຕິບັດບັນດາໜ້າວຽກລຸ່ມນີ້ໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍທີ່ກຳນົດໄວ້:

**ວຽກງານຈັດຕັ້ງ:**

1. ສືບຕໍ່ປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງລຸ່ມນີ້:
    - ພັດທະນາຊຸມຊົນປະຈຳເມືອງໃໝ່, ແຂວງຜົ້ງສາລີ 01 ຕຳແໜ່ງ
    - ວິສະວະກອນອອກແບບ ປະຈຳ ທລຍ ສູນກາງ 01 ຕຳແໜ່ງ
    - ປະເມີນ ແລະ ຄັດເລືອກຊ່ຽວຊານຕ່າງປະເທດ 02 ຕຳແໜ່ງ: ຊ່ຽວຊານວາງແຜນງົບປະມານ ແລະ ນະໂຍບາຍດ້ານບຸກຄະລາກອນ
2. ຕິດຕາມການອະນຸມັດຈາກຜູ້ໃຫ້ທຶນ ສຳລັບ ຕຳແໜ່ງຜູ້ຊ່ວຍບໍລິຫານ-ການເງິນ ຄປພ ປະຈຳແຂວງສະຫວັນນະເຂດ.

3. ຕິດຕາມການອະນຸມັດຈາກຜູ້ໃຫ້ທຶນ ກ່ຽວກັບຕໍ່ສັນຍາຂອງຊ່ຽວຊານທີ່ປຶກສາຕ່າງປະເທດ ປະຈໍາ ທລຍ ສູນກາງ (Mr. Julien).
4. ທົບທວນກອບໜ້າວຽກຂອງແຕ່ລະຕໍາແໜ່ງ.
5. ກະກຽມປະເມີນຜົນການຈັດຕັ້ງປະຕິບັດວຽກຂອງພະນັກງານ ປະຈໍາປີ 2014 ເພື່ອອອກສັນຍາປີ 2015.
6. ສັງລວມ ແລະ ປະເມີນຜົນການປະຕິບັດວຽກພະນັກງານ ທລຍ ສູນກາງ ຕາມແບບຟອມຂອງ ຄພທລ

**ວຽກງານພັດທະນາຊຸມຊົນ:**

- ລົງຕິດຕາມການຈັດຕັ້ງປະຕິບັດວຽກງານ ທລຍ ຢູ່ພາກສະໜາມ ເພື່ອກະກຽມການມາຢ້ຽມຢາມຂອງຜູ້ໃຫ້ທຶນສໍາລັບ 6 ເດືອນທ້າຍປີ 2014 ຢູ່ແຂວງສະຫວັນນະເຂດ ຊຶ່ງມີໂຄງການ ທລຍ ທົ່ວໄປ ແລະ ທລຍ ຄປພ.
- ລົງຕິດຕາມ ແລະ ເຂົ້າຮ່ວມການຈັດກອງປະຊຸມປະສານງານການວາງແຜນພັດທະນາກຸ່ມບ້ານຂັ້ນເມືອງຂອງ 5 ເມືອງ ທົດລອງ CDD ແຂວງຫລວງພະບາງ, ແຂວງອຸດົມໄຊ ແລະ ແຂວງສະຫວັນນະເຂດ ຊຶ່ງຈະຈັດຂຶ້ນໃນລະຫວ່າງທ້າຍເດືອນພະຈິກ 2014 ນີ້.
- ສັງລວມຂໍ້ມູນແຜນພັດທະນາບ້ານ, ຂໍ້ມູນຄວາມທຸກຍາກ ແລະ ຂໍ້ມູນອື່ນໆຂັ້ນບ້ານພາຍໃນ 5 ເມືອງທົດລອງ CDD ແຂວງ ພ້ອມທັງສືບຕໍ່ສ້າງຖານຂໍ້ມູນຂອງ 5 ເມືອງທົດລອງ ທີ່ນໍາໃຊ້ຮູບແບບ CDD.
- ຕິດຕາມ ແລະ ສັງລວມຂໍ້ມູນຜູ້ປະສານງານກຸ່ມ ແລະ ແຜນພັດທະນາຂອງກຸ່ມຍິງ ຢູ່ 5 ເມືອງທົດລອງ ພາຍໃນ 3 ແຂວງ,
- ປະສານກັບສະພັນແມ່ຍິງເມືອງ ຢູ່ທົດລອງ CDD ແລກປ່ຽນຄົດຮຽນກ່ຽວກັບ ແຜນການຈັດຕັ້ງປະຕິບັດ ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ຢູ່ເມືອງທົດລອງ ແລະ ແຜນການສົ່ງເສີມສິດສະເໝີພາບ ຍິງຊາຍ ໃນເຂດຊຸມຊົນຂອງເມືອງ,
- ສືບຕໍ່ກະກຽມຂໍ້ແນະນໍາໃນການຈັດທັດສະນະສຶກສາສໍາລັບ ຜູ້ປະສານງານກຸ່ມບ້ານ ແລະ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ພິເສດໃນເມືອງເປົ້າໝາຍທົດລອງຂອງ ທລຍ, ຊຶ່ງມີແຜນຈັດກິດຈະກໍາດັ່ງກ່າວ ໃນລະຫວ່າງທ້າຍໄຕມາດ 1 ຫາ ໄຕມາດ 2 ຂອງຮອບວຽນ 12 (2014-2015).
- ສັງລວມຂໍ້ມູນດໍາເນີນນະໂຍບາຍການປ້ອງກັນຜົນກະທົບດ້ານສັງຄົມພາຍຫລັງສໍາເລັດການສໍາຫລວດອອກແບບໂຄງການຍ່ອຍ ປະຈໍາຮອບວຽນ 12.
- ປະສານງານປົກກະຕິກັບບັນດາໂຄງການພັດທະນາອື່ນໆ, ສະມາຄົມ ແລະ ພາກລັດ ຢູ່ໃນສະມາຊິກເຄືອຄ່າຍບົດບາດຍິງຊາຍ ເພື່ອສົນທະນາເລື່ອງການສະເຫລີມສະຫລອງວັນລຶບລ້າງທຸກຄວາມຮຸນແຮງທີ່ມີຕໍ່ແມ່ຍິງ ໃນລະຫວ່າງທ້າຍເດືອນ ພະຈິກ 2014 ນີ້.
- ໄປຖ່າຍທໍາສາລະຄະດີ ໂຄງການ ຄປພ ທີ່ສະຫວັນນະເຂດ ແລະ ທົ່ວພັນ
- ເຜີຍແຜ່ ສາລະຄະດີ: ໂຮງຮຽນປາກຄານ, ວັງສະຽວນ ເມືອງແອດ, ນໍ້າລິນບ້ານໂພນທອງ ຜ່ານສື່ໂທລະພາບລາວຊ່ອງ 3 .
- ສືບຕໍ່ສ້າງປຶ້ມຄູ່ມືອະທິບາຍຄວາມໝາຍຂອງຮູບພາບ CDD
- ສືບຕໍ່ກະກຽມການເຮັດສາລະຄະດີຝຶກອົບຮົມຂອງໜ່ວຍງານວິຊາການເຊິ່ງມີ 3 ຫົວຂໍ້ໂຄງການຍ່ອຍຄື: ການຈັດຕັ້ງປະຕິບັດ ແລະ ບູລະນະສ້ອມແປງ ອາຄານ, ນໍ້າລິນ, ນໍ້າບາດານ

- ກະກຽມ ຮູບພາບ, ຂໍ້ມູນ ແລະ ສື່ສິ່ງພິມຕ່າງໆຂອງ ທລຍ ເພື່ອວາງສະແດງຢູ່ກອງປະຊຸມໂຕະມົນປະຈຳປີ 2014 ຂຶ້ນທີ່ ໂຮງແຮມດອນຈັນພາເລດ ເຊິ່ງກອງປະຊຸມ ລະຫວ່າງລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາທີ່ໃຫ້ການຊ່ວຍເຫລືອແກ່ ສປປ ລາວ
- ຕິດຕາມ ແລະ ຊຸກຍູ້ໃນການຜະລິດເຄື່ອງມື IEC ຂອງໂຄງການ ຄປພ ແລະ ທລຍ ເພື່ອຮັບໃຊ້ເພື່ອສະແດງໃຫ້ຄະນະວິຊາການຂອງທະນາຄານໂລກຈະມາປະເມີນຜົນວຽກງານ ທລຍ ໃນລະຫວ່າງວັນທີ 20/11-2/12/2014

**ວຽກງານ ຕິດຕາມ ປະເມີນຜົນ:**

1. ສືບຕໍ່ເຮັດສຳເລັດບົດລາຍງານປະຈຳສົກປີ 2013-2014 ແລະ ສົ່ງໃຫ້ຜູ້ໃຫ້ທຶນກ່ອນການມາກວດກາທ້າຍເດືອນທ້າຍປີ.
2. ສືບຕໍ່ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍທີ່ຍັງບໍ່ທັນສຳເລັດ ເພື່ອລາຍງານຕໍ່ຄະນະບໍລິຫານ ໂຄງການ ທລຍ ເພື່ອຫາວິທີແກ້ໄຂໃຫ້ໂຄງການດັ່ງກ່າວສຳເລັດ ແລະ ອຳນວຍຄວາມສະດວກໃຫ້ແກ່ຊຸມຊົນ.
3. ຕິດຕາມ ແລະ ກວດກາຂໍ້ມູນຕ່າງໆໃນລະບົບຖານຂໍ້ມູນ ເພື່ອເປັນບ່ອນອີງກ່ຽວກັບຜົນສຳເລັດຂອງ ທລຍ ແລະ ເພື່ອການມາກວດກາຂອງຜູ້ໃຫ້ທຶນ.
4. ປະສານງານຮ່ວມກັບຜູ້ໃຫ້ທຶນໃນການຕິດຕາມກວດກາໂຄງການຍ່ອຍໃນເດືອນພະຈິກ ເຖິງເດືອນທັນວາ 2014

**ວຽກວິສະວະກຳ:**

- ສືບຕໍ່ສັງລວມ ແລະ ຕິດຕາມໂຄງການຍ່ອຍ ຮອບວຽນ 12 ແລະ GOL ສົ່ງໃຫ້ຜູ້ໃຫ້ທຶນ (WB) ເພື່ອຂໍ NOL
- ສັງລວມໂຄງການຍ່ອຍ 5 ປີ ຜ່ານມາຂອງແຂວງຫົວພັນ, ສະຫວັນນະເຂດ, ເຊກອງ ແລະ ອັດຕະປື
- ຂຶ້ນແຜນເຂົ້າຮ່ວມກວດກາສົ້ນສ່ວນເຫລັກຂີ້ອູ່ທັງ 3 ແຫ່ງ ແລະ ທົດລອງປະກອບກ່ອນຈະນຳໄປຍ້ອມນ້ຳຢາກັນໜ້ຽງ (Gavanoze) ຢູ່ປະເທດ ສ.ສ ຫວຽດນາມ ຮ່ວມກັບໂຄງການ Hevetas Lao.
- ສັງລວມຮູບພາບ Pictogramme ຂອງແຕ່ລະປະເພດໂຄງການຍ່ອຍ.
- ສ້າງປຶ້ມຄູ່ມືກໍ່ສ້າງປະເພດອາຄານ ສຳລັບຊຸມຊົນ (ອີງໃສ່ຄູ່ມືຈາກປະເທດກຳປູເຈຍ)
- ທົບທວນ ແລະ ປັບປຸງແບບຟອມສະພາບແວດລ້ອມ ECOP ເພື່ອໃຫ້ແຂວງນຳໃຊ້
- ເຂົ້າຮ່ວມ WB Mission ໃນລະຫວ່າງວັນທີ 17 ເດືອນພະຈິກ 2014 ເຖິງວັນທີ 3 ເດືອນທັນວາ 2014

**ວຽກບໍລິຫານ ແລະ ການເງິນ:**

- ໂອນເງິນນຳຜູ້ໃຫ້ທຶນ ບ້ວງ IDA ແລະ TF ປະມານ 1.800.000 USD ສຳລັບເດືອນ 8-9/2014
- ປະກອບເອກະສານຂໍເບີກຖອນເງິນໂຄງການບວ້ງທຶນສົມທົບລັດຖະບານຈຳນວນ 63 ໂຄງການໃນ 5 ແຂວງ
- ກະກຽມເອກະສານສຳລັບການກວດສອບປະຈຳສົກປີ 2013-2014 ກໍ່ຄື ຕຸລາ 2013 - ກັນຍາ 2014
- ສະຫລຸບບົດລາຍງານປະຈຳເດືອນຂອງບໍລິຫານ-ການເງິນ ຂອງເດືອນ ຕຸລາ 2014
- ສະຫລຸບການໂອນງົບປະມານໂຄງການຍ່ອຍລົງແຂວງ ບ້ານຈົນຮອດວັນທີ 31/10/2014 ຂອງທັງສາມຮອບວຽນ

- ປຶກສາຫາລື ແລະ ແນະນຳວຽກງານການເຮັດແຜນງົບປະມານ ກັບພະນັກງານ ຕຳແໜ່ງການເງິນ ງົບປະມານ ທີ່ມາຮັບຜິດຊອບຕຳແໜ່ງແທນຜູ້ເກົ່າທີ່ໄດ້ລາອອກໄປ

| ຜູ້ອຳນວຍການບໍລິຫານ ທລຍ | ຫົວໜ້າພະແນກຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
| --- | --- | --- |
| ຕ.ພ.ຫ.ລ ຜູ້ອຳນວຍການ ບໍລິຫານ ກອງທຶນຫຼຸດຜ່ອນຄວາມທຸກຍາກ | Hath | Svone |
| ------------------------ | ------------------------ | -------------------- |
| ບຸນກວ້າງ ສຸວັນນະພັນ<br>Bounkhouang SOUVANNAPHANH | ທັດທະຈັນ ພົມພັນທະວົງ | ສຸກຖາວອນ ໄຊຍະສານ |